ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ລະຫວ່າງ ສະຖາບັນການທະນາຄານ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫລັກຊັບ




ໃນວັນທີ 29 ສິງຫາ 2022 ສະຖາບັນການທະນາຄານ ແລະ ສໍານັກງານຄະນະກໍາມະການຄຸ້ມຄອງຫລັກຊັບໄດ້ຈັດຕັ້ງພິທີເຊັນບົດບັນທຶກຄວາມເຂົ້າໃຈການຮ່ວມມືສອງຝ່າຍ (MOU) ຮ່ວມກັນເພື່ອເປັນການຍົກສູງການພົວພັນຮ່ວມມືດ້ານວິຊາການຂອງທັງສອງພາກສ່ວນໃຫ້ມີຄວາມໜັກແໜ້ນ ແລະ ແໜ້ນແຟ້ນກວ່າເກົ່າ. ໂດຍສະເພາະແມ່ນ ແນໃສ່ການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ເວົ້າລວມ, ເວົ້າສະເພາະ ກໍຄືການຜັນຂະຫຍາຍແຜນງານໂຄງການລວມ ຂອງ ສທຄ ແລະ ສຄຄຊ ເຂົ້າໃນການພັດທະນາຊັບພະຍາກອນມະນຸດ, ການພັດທະນາວຽກງານຕະຫລາດທຶນ (Capital Markets), ການຍົກລະດັບພັດທະນາຫລັກສູດການຮຽນ-ການສອນ, ການຝຶກອົບຮົມ-ສໍາມະນາ ລົງເລິກໃນວຽກງານຕະຫລາດທຶນ ແລະ ສະຖາບັນການເງິນທີ່ກ່ຽວຂ້ອງ,ການບໍລິຫານບໍລິການວິຊາການໃຫ້ມີໂສມໜ້າໃໝ່ ແລະ ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານທີ່ມີຄຸນນະພາບສົມຄູ່ລະຫວ່າງດ້ານທິດສະດີ ແລະ ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງໄດ້ນັບມື້ນັບດີຂຶ້ນ.

ລົງນາມໃນ MOU ຄັ້ງນີ້ໂດຍ ທ່ານ ປອ. ອາຄົມ ປຣະເສີດ ຫົວໜ້າສະຖາບັນການທະນາຄານ ແລະ ທ່ານ ນ.ຟອງຈິນດາ ແສງສຸລິວົງ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫລັກຊັບ, ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ພຸດທະໄຊ ສີວິໄລ ຄະນະປະຈໍາພັກ, ຮອງຜູ້ວ່າການ ທຫລ, ມີຄະນະກົມ, ຄະນະພະແນກ, ຜູ້ຕາງໜ້າຈາກບັນດາບໍລິສັດຫລັກຊັບ ແລະ ພະນັກງານວິຊາການຂອງ

ທັງສອງພາກສ່ວນໄດ້ເຂົ້າຮ່ວມຢ່າງພ້ອມພຽງ.ໃນພິທີດັ່ງກ່າວ ຫົວໜ້າ ສທຄ ແລະ ຫົວໜ້າ ສຄຄຊ ໄດ້ຕາງໜ້າຂຶ້ນລາຍງານເນື້ອໃນ, ສະພາບການຮ່ວມມື ແລະ ການປະສານງານໃນໄລຍະຜ່ານມາດ້ວຍຄວາມຮັບຜິດຊອບ ແລະ ມີຜົນສຳເລັດ.




ໃນໂອກາດດັ່ງກ່າວ. ຍັງໄດ້ຮັບຟັງຄຳເຫັນໂອ້ລົມຈາກ ທ່ານ ພຸດທະໄຊ ສີວິໄລ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ຊຶ່ງທ່ານໄດ້ສະແດງຄວາມຍ້ອງຍໍ-ຊົມເຊີຍ ຕໍ່ທັງສອງພາກສ່ວນທີ່ສາມາດຈັດຕັ້ງການຮ່ວມມືຢ່າງມີຜົນສຳເລັດ ໂດຍໄດ້ມີຄວາມຮັບຜິດຊອບສູງ, ວິໄສທັດ ຈັດຕັ້ງຜັນຂະຫຍາຍ, ປຶກສາຫາລື, ປະສານສົມທົບການແລກປ່ຽນຮ່ວມກັນ. ນອກນີ້ທ່ານຍັງໄດ້ເນັ້ນໃຫ້ທັງສອງພາກສ່ວນຕ້ອງເພີ່ມຄວາມເອົາໃຈໃສ່ ໃນການຮ່ວມມືໃຫ້ນັບມື້ມີຄວາມກົມກຽວ, ສາມາດນຳເອົາເນື້ອໃນການລົງນາມຮ່ວມມືດ້ານວິຊາການດັ່ງກ່າວ ມາຈັດຕັ້ງຜັນຂະຫຍາຍໄດ້ຢ່າງມີປະສິດທິຜົນ, ຕ້ອງມີການພັດທະນາຄູຝຶກ, ຫລັກສູດການຮຽນ-ການສອນ, ເອົາໃຈໃສ່ໃນການຈັດຝຶກອົບຮົມ-ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ ຢ່າງເປັນຂະບວນການຟົດຟື້ນ ແລະ ເປັນປົກກະຕິ ຕາມແຜນງານໂຄງການທີ່ໄດ້ກຳນົດໄວ້ເປັນແຕ່ລະໄລຍະ.

**# ຂ່າວໂດຍ: ສີລິມຸງຄຸນ ຫລວງລາດ**
**ສະຖາບັນການທະນາຄານ**
**# ພາບໂດຍ: ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

# ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ